# ເອກະສານກຳກັບຢາ
# ALLIMEFMIC-500MG

**ຊື່ທົ່ວໄປ:** Mefenamic acid

**ຊື່ຜະລິດຕະພັນ:** ALLIMEFMIC-500MG

**ສ່ວນປະກອບ:** Mefenamic acid………………………………500mg

**ຂໍ້ບົ່ງໃຊ້:**

- ໃຊ້ປິ່ນປົວອາການເຈັບຫົວ, ປວດຕາມຕົນໂຕ, ປວດບາດແຜຫຼັງການຜ່າຕັດ, ປວດປະຈຳເດືອນ ແລະ ອື່ນໆ.

**ວິທີໃຊ້:**

- ຜູ້ໃຫຍ່ໃຊ້ແກ້ປວດ ຫຼື ຮັກສາອາການປວດປະຈຳເດືອນ ຄັ້ງແລກແມ່ນກິນ 1 ເມັດ ( 500mg ), ສືບຕໍ່ກິນເຄິ່ງເມັດ (250mg) ໃນທຸກໆ 6 ຊົ່ວໂມງ, ບໍ່ຄວນກິນຕິດຕໍ່ກັນເກີນ 7 ວັນ.

**ຂໍ້ຫ້າມໃຊ້:**

- ຫ້າມໃຊ້ໃນຜູ້ແພ້ຢານີ້ ແລະ ຢາຕ້ານການອັກເສບໃນກຸ່ມ NSAIDs.
- ຫ້າມໃຊ້ໃນຜູ້ເປັນບາດແຜໃນກະເພາະອາຫານ, ລຳໄສ້ອັກເສບ.
- ຫ້າມໃຊ້ໃນແມ່ຍິງຖືພາ ແລະ ແມ່ຍິງທີ່ກຳລັງລ້ຽງລູກດ້ວຍນ້ຳນົມແມ່.

**ຄຳເຕືອນ:**

- ຜູ້ທີ່ມີອາການແພ້ຢາ Aspirin ຫຼື ຢາແກ້ອັກເສບທີ່ຢູ່ໃນກຸ່ມ NSAIDs ອາດມີອາການແພ້ຕໍ່ຢານີ້ ແລະ ຍັງສາມາດເຮັດໃຫ້ເກີດພາວະຫຼອດລົມຫົດເກັ່ງໃນຜູ້ປ່ວຍທີ່ມີໂລກຫອບຫືດທີ່ແພ້ຢາ Aspirin.
- ຄວນກິນຢານີ້ຫຼັງອາຫານ ຫຼື ພ້ອມອາຫານ ເພື່ອຫຼຸດຜ່ອນການລະຄາຍເຄືອງຕໍ່ກະເພາະລຳໄສ້.
- ບໍ່ຄວນກິນຢານີ້ຕິດຕໍ່ກັນເກີນ 7 ວັນ.
- ເມື່ອມີອາການຖອກທ້ອງ ແລະ ມີຕຸ່ມຜື່ນເກີດຂື້ນໃນໄລຍະການໃຊ້ຢານີ້, ຄວນຢຸດໃຊ້ທັນທີ.
- ຄວນໃຊ້ຢ່າງລະມັດລະວັງໃນຜູ້ປ່ວຍທີ່ເປັນມະເຮັງ ເພາະວ່າມັນສາມາດເພີ່ມຄວາມເປັນພິດຕໍ່ກະເພາະລຳໄສ້ ແລະ ໝາກໄຂ່ຫຼັງ ລວມທັງຢັບຢັ້ງການເຮັດວຽກຂອງ ເມັດເລືອດນ້ອຍ (platelet).

**ຜົນຂ້າງຄຽງ:**

- ຜົນຂ້າງຄຽງອາດພາໃຫ້ປວດຫົວ, ວິນວຽນ, ປັ້ນທ້ອງ, ຮາກ, ເບື່ອອາຫານ, ອາຫານບໍ່ຍ່ອຍ, ເຫື່ອອອກ, ຫາຍໃຈບໍ່ສະດວກ, ນອນບໍ່ຫຼັບອື່ນໆ ແລະ ໃນກໍລະນີມີອາການຮຸນແຮງອາດເຮັດໃຫ້ເກີດບາດແຜໃນກະເພາະອາຫານໄດ້.

**ຮູບແບບຢາ:** ຢາເມັດສີບົວ.

**ວັນໝົດອາຍຸ:** 36 ເດືອນຫຼັງຈາກວັນຜະລິດ.

**ຂະໜາດບັນຈຸ:** ບັນຈຸໃນກັບ, 1 ກັບມີ 25 ແຜງ, 1 ແຜງ ມີ 4 ເມັດ.

**ການເກັບຮັກສາ:**

- ເກັບໄວ້ບ່ອນບໍ່ມີແສງແດດ ແລະ ຄວາມຊຸ່ມ ພາຍໃຕ້ອຸນຫະພູມ 25°C ເກັບໄວ້ຫ່າງໄກຈາກເດັກ.

**ຜະລິດໂດຍ:**

ໂຮງງານຜະລິດຢາ ລາວພັນທະມິດ ຟາກມາ ກຣຸບ ຈຳກັດ
ສະຖານທີ່: ຕັ້ງຢູ່ເຂດ ພັດທະນາກວມລວມ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +856-21-737 051
www.alliancepharmagroup.com

# ALLIMEFMIC-500MG

**Generic name:** Mefenamic acid

**Brand name**: ALLIMEFMIC-500MG

**Composition:** Mefenamic acid……………………………….500mg

**Indications:**

- For the treatment of headaches, generalized body pain, postoperative wound pain, menstrual pain, and other types of pain.

**Dosage:**

- Adult oral dosage: analgesia or treatment of dysmenorrhea, 500mg for first dose then 250mg once every 6 hours for a maximum of 7 days.

**Contraindications:**

- This product is contraindicated in patients who are allergic to this product and other non-steroidal anti-inflammatory drugs.
- Active peptic ulcer, inflammatory bowel disease.
- Pregnant and lactating women.

**Warnings:**

- People who are allergic to Aspirin or other non-steroidal anti-inflammatory drugs may have cross-allergic reactions to this drug.
- This product should be taken after meals or with food to reduce irritation to the gastrointestinal tract.
- This product should not be used for longer than 7 days at a time.
- If rash or diarrhea occurs during the course of treatment, discontinue immediately.
- Chemotherapy patients should use with extreme caution as its use can cause gastrointestinal and renal toxicity as well as inhibit platelet function

**Adverse effects:**

- Gastrointestinal reactions are common, such as heartburn, loss of appetite, nausea, abdominal pain, diarrhea and indigestion. Severe cases can cause peptic ulcers.

**Dosage form:** Pink tablet

**Expiry date:** 36 months after date of manufacture.

**Packaging:** 4 tablets per blister pack, 25 blister packs per box.

**Storage:**

- Store under 25$^{o}$C, protected from moisture and direct sunlight away from children.

**Manufactured by:**

Laos Alliance Pharmaceutical Group Factory

Saysettha Development Zone, Vientiane Capital, Lao PDR

Tel: +856-21-737 051

www.alliancepharmagroup.com